ພຶສພານີ້ໄດ້        ມື້ໃໝ່ເປັນວັນດີ
ທີ່ນຶ່ງເປັນວັນໝາຍ    ອ້າຍເກີດມາໃນວັນນີ້
ຈົ່ງສົດສີແສງກ້າ         ເໝືອນນະພາຕາວັນສ່ອງ
ຈົ່ງສົມປອງສິ່ງນຶກໄວ້    ໃຫ້ໃຈເຫຼື້ອມດັ່ງມະນີ  ອ້າຍໜູເອີຍ

ໃຫ້ຮົ່ມໂພຕົ້ນນີ້           ເປັນທີ່ເພິ່ງຂອງວົງວານ
ລູກຫຼານພົງພັນສາ        ຍາດຕິກາໃຫ້ມາລ້ອມ
ພ້ອມພໍ່າການງານອ້າຍ    ຈະເລີນໄວໃຫ້ສົດຊື່ນ
ຂໍຄອບຄົວຈົ່ງຢັ້ງຢືນ  ຄວາມຂົມຂື່ນຄາດແຄ້ວ
        ມາເຫັນແລ້ວໃຫ້ແລ່ນກາຍ    ອ້າຍເອີຍ

ສິ່ງໃດທີ່ໂຊກຮ້າຍ           ຈົ່ງກາຍຫ່າງລາໜີ
ມີແຕ່ຄວາມສໍາລານ         ໃຫ້ຊື່ນບານໃຈເຈົ້າ
ເງິນທອງລຸເທເຂົ້າ            ມະໂນເນົາແຕ່ຄວາມຊື່ນ
ສຸຂສົດໃສລາບລື້ນ           ກາງຄືນນັ້ນຄູ່ພະຈັນ  ອ້າຍເອີຍ

ນິຣາວັນຜູ້ຄິດຄົ້ນ           ເລີ້ນຕົ້ນຮ່ວມລວມແນວຄິດ
ມິດເພື່ອນຄຣູທັງອາຈານ    ລ່ວມປະສານພອນອ້າຍ
ສີພັນດອນ  ຂໍສິ່ງກອນມາໃຫ້    ແທນຫົວໃຈອັນມີຄ່າ
ສຸຂສົດຊື່ນເຖິດໜາ     ປາຖນາຫງັງໃຫ້ໄດ້  ສົມໃຈອ້າຍຄູ່ຊູ່ແນວ  ສາທຸ

ໂດຍ:  ສາວຫູ້ກເຈັດ